JBMA ビルメンテナンス

ການຈອງສອບເສັງ, ປ່ຽນແປງການຈອງ, ຍົກເລີກ:

ສ້າງແອັກຄາວ | ເຂົ້າສູ່ລະບົບ

・ກໍລະນີລືມຊື່ຜູ້ໃຊ້
・ກໍລະນີລືມລະຫັດຜ່ານ

ຄົ້ນຫາສູນສອບເສັງ | ເບິ່ງການສອບເສັງ | ການພິຈາລະນາການສອບເສັງ | ຕິດຕໍ່ສອບຖາມ

ການສອບເສັງຂອງສະມາຄົມບຳລຸງຮັກສາອາຄານທີ່ປະເທດຍີ່ປຸ່ນ (JBMA)

## ກ່ຽວກັບແບບທົດ ສອບ ປະ ເມີນ ຜົນ ທັກສະ ສະ ເພາະດ້ານ ການທຳຄວາມສະອາດອາຄານ ລະດັບ 1

ນີ້ ແມ່ນ ການ ທົດ ສອບທັກສະ  ຜູ້ ທີ່ ຕ້ອງ ການ ເຮັດ ວຽກ ຢູ່ ໃນ ປະ ເທດ ຍີ່ ປຸ່ນ, ຕ້ອງ ມີ ໃບຢັ້ງຢືນສະຖານະພາບໃນການອາໄສຢູ່ "ທັກສະສະເພາະດ້ານ ລະດັບ 1" (ການທຳຄວາມສະອາດອາຄານ).
ເຮົາຈະກວດສອບທັກສະແລະຄວາມຮູ້ຂອງທ່ານທີ່ກ່ຽວຂ້ອງກັບການທຳຄວາມສະອາດອາຄານ.

## ເງື່ອນໄຂກຳນົດຄຸນສົມບັດ

- ມີອາຍຸ 17 ປີຂຶ້ນໄປໃນວັນທີສອບເສັງ. ຍົກເວັ້ນ, ຄົນສັນຊາດອິນໂດເນເຊຍຕ້ອງມີອາຍຸ 18 ປີຂຶ້ນໄປໃນວັນທີສອບເສັງ.
- ຜູ້ທີ່ເຂົ້າສອບເສັງໃນປະເທດຍີ່ປຸ່ນ, ຕ້ອງມີໃບຢັ້ງຢືນສະຖານະພາບໃນການອາໄສຢູ່ທີ່ບໍ່ກາຍມື້ກຳນົດ.

## ເນື້ອ ໃນ  ແລະ ໄລ ຍະ ເວ ລາ ການ ສອບ ເສັງ

ການສອບເສັງປະກອບດ້ວຍການສອບເສັງພາກທິດສະດີແລະພາກປະຕິບັດຕົວຈິງ. ເຊິ່ງຈະເປັນພາສາຍີ່ປຸ່ນທັງໝົດ.
ການສອບເສັງພາກທິດສະດີ: ຄຳຖາມ 20 ຂໍ້ (ຖ້າໄດ້ຄະແນນ 60% ຂຶ້ນໄປ ແມ່ນຜ່ານ), ໄລຍະເວລາການສອບເສັງ 20 ນາທີ
ການສອບເສັງພາກປະຕິບັດຕົວຈິງ: ຄຳຖາມ 30 ຂໍ້ (ຖ້າໄດ້ຄະແນນ 60% ຂຶ້ນໄປ ແມ່ນຜ່ານ), ໄລຍະເວລາການສອບເສັງ 30 ນາທີ
ນອກຈາກການສອບເສັງ 50 ນາທີແລ້ວ, ທ່ານຍັງຈະຕ້ອງໃຊ້ເວລາອີກ 10 ນາທີເພື່ອເຊັນເຫັນດີໃນການບໍ່ເປີດເຜີຍຂໍ້ມູນການສອບເສັງ ແລະ ຕອບແບບສອບຖາມໃຫ້ຮຽບຮ້ອຍ.

## ຄ່າທຳນຽມການສອບເສັງ

ກໍລະນີເຂົ້າສອບເສັງຢູ່ປະເທດຍີ່ປຸ່ນ: 4,400 yen (ລວມພາສີບໍລິໂພກ 10%)
ກໍລະນີສອບເສັງຢູ່ນອກປະເທດຍີ່ປຸ່ນ: 30 USD

## ຂັ້ນຕອນການສອບເສັງ, ການຈອງແລະການລົງທະບຽນອອນລາຍ

**ຂັ້ນຕອນທີ 1: ການລົງທະບຽນຜູ້ໃຊ້ໃໝ່ (ລົງທະບຽນແອັກຄາວ)**

ເພື່ອເຂົ້າສອບເສັງການ ປະ ເມີນ ຜົນ ທັກສະ ສະ ເພາະດ້ານ ການທຳຄວາມສະອາດອາຄານ ລະດັບ 1 ກັບ Pearson VUE, ທ່ານຈະຕ້ອງລົງທະບຽນແອັກຄາວຜູ້ນຳໃຊ້. ກົດ "ສ້າງແອັກຄາວ" ແລະປະຕິບັດຕາມຄຳແນະນຳໃນໜ້າຈໍ ເພື່ອລົງທະບຽນເປັນຜູ້ນຳໃຊ້.
ຖ້າທ່ານມີແອັກຄາວຢູ່ແລ້ວ, ໃຫ້ດຳເນີນການຕາມຂັ້ນຕອນທີ 2.
*ຂໍ້ລະວັງ, ຖ້າຊື່ທີ່ທ່ານລົງທະບຽນນັ້ນແຕກຕ່າງຈາກຊື່ຢູ່ໃນເອກະສານຢັ້ງຢືນຕົວຕົນທີ່ທ່ານສະແດງຢູ່ສູນສອບເສັງໃນມື້ສອບເສັງ, ທ່ານຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າສອບເສັງ.

**ໝາຍເຫດ**

ທ່ານສາມາດສະໝັກໄດ້ຈົນຮອດວັນທີ 31 ມີນາ 2026. ຫຼັງຈາກວັນທີ 1 ເມສາ 2026, ທ່ານສາມາດຈອງໃນລະບົບໄດ້, ແຕ່ກະລຸນາຢ່າເຮັດການຈອງ.

**ຂັ້ນຕອນທີ 2: ການຈອງສອບເສັງ**

ກະລຸນາໃສ່ຊື່ຜູ້ໃຊ້ ແລະລະຫັດຜ່ານທີ່ທ່ານລົງທະບຽນໃນຂັ້ນຕອນທີ 1 ເພື່ອຈອງການສອບເສັງຂອງທ່ານ.

* ຖ້າທ່ານມີບັດສ່ວນຫຼຸດ, ກົດ "ເພີ່ມບັດສ່ວນຫຼຸດ ຫຼືລະຫັດໂປຣໂມຊັນ" ໃນໜ້າຈໍທີ່ທ່ານໃສ່ຂໍ້ມູນການຊໍາລະເງິນ ແລະໃບບິນຂອງທ່ານ, ໃສ່ໝາຍເລກບັດສ່ວນຫຼຸດຂອງທ່ານແລ້ວ, ກົດທີ່ "ນໍາໃຊ້" ຈາກນັ້ນດໍາເນີນການຈອງຂອງທ່ານໃຫ້ສໍາເລັດ.

* ເມື່ອການຈອງຂອງທ່ານສໍາເລັດແລ້ວ, ທ່ານຈະໄດ້ຮັບອີເມວຢືນຢັນການຈອງ.

**ໄລຍະເວລາການ ຈອງ, ການ ປ່ຽນ ແປງ ການ ຈອງ ແລະ ໄລຍະເວລາການ ຍົກ ເລີກ**

- **ໄລຍະເວລາການ ຈອງ:** 11:59 p.m. ຂອງ ໜຶ່ງມື້ ກ່ອນມື້ ສອບ ເສັງ
- **ການ ປ່ຽນ ແປງ ແລະ ໄລຍະເວລາການ ຍົກ ເລີກ:** 24 ຊົ່ວໂມງກ່ອນວັນທີ ແລະເວລາການຈອງປັດຈຸບັນ

**ໝາຍເຫດ:** ໄລຍະເວລາທັງໝົດແມ່ນຂຶ້ນກັບເວັບໄຊການຈອງອອນລາຍ. ກໍລະນີທີ່ທ່ານຈອງ, ປ່ຽນແປງການຈອງ, ຫຼືຍົກເລີກການຈອງຜ່ານທາງຝ່າຍບໍລິການລູກຄ້າ,

ທ່ານຕ້ອງເຮັດໃຫ້ສໍາເລັດພາຍໃນໄລຍະເວລາທີ່ກໍານົດແລະພາຍໃນເວລາເຮັດວຽກຂອງຝ່າຍບໍລິການລູກຄ້າ.

ການຈອງບໍ່ສາມາດປ່ຽນແປງຫຼືຍົກເລີກໄດ້ຫຼັງຈາກກາຍມື້ກໍານົດ.

**ວິທີການຈ່າຍເງິນ**

ຄ່າທໍານຽມການສອບເສັງແມ່ນສາມາດຈ່າຍໄດ້ດ້ວຍບັດເຄຣດິດ ຫຼືບັດສ່ວນຫຼຸດເທົ່ານັ້ນ.

- ບັດເຄຣດິດ

  ທ່ານສາມາດໃຊ້ບັດ VISA, Master, JCB ແລະ AMEX.

- ບັດເຕີມເງິນລ່ວງໜ້າ

  ກໍລະນີທີ່ບໍລິສັດ ຫຼືໂຮງຮຽນຂອງທ່ານຈ່າຍເງິນຄ່າສອບເສັງ, ແມ່ນສາມາດໃຊ້ບັດເຕີມເງິນລ່ວງໜ້າ. ແຕ່ຕ້ອງມີ, ປະລິມານການຊື້ຢ່າງຕໍ່າແມ່ນ 10 ການສອບເສັງ (10 ຄົນ)ຂຶ້ນໄປ. ສໍາລັບລາຍລະອຽດກ່ຽວກັບວິທີການຊື້ບັດເຕີມເງິນລ່ວງໜ້າ, ກະລຸນາເບິ່ງທີ່ລິ້ງຂ້າງລຸ່ມນີ້. ຫຼັງຈາກຊື້ບັດເຕີມເງິນແລ້ວ, ໃຫ້ແຈກຢາຍເລກບັດໃຫ້ຜູ້ສະໝັກແຕ່ລະຄົນ.

  (ກໍລະນີເຂົ້າສອບເສັງຢູ່ປະເທດຍີ່ປຸ່ນ) ຮ້ານຂາຍບັດເຕີມເງິນ ປະລິມານການຊື້ຢ່າງຕໍ່າ: 10 ການສອບເສັງຂຶ້ນໄປ～

  (ກໍລະນີເຂົ້າສອບເສັງນອກປະເທດຍີ່ປຸ່ນ) Purchase Vouchers ປະລິມານການຊື້ຢ່າງຕໍ່າ: 1 ການສອບເສັງຂຶ້ນໄປ～

**ຂັ້ນຕອນທີ 3: ການກະກຽມສໍາລັບການສອບເສັງ**

ກະລຸນາກວດເບິ່ງການກະກຽມ ແລະຂັ້ນຕອນໃນມື້ສອບເສັງ ຕາມໜ້າຂ້າງລຸ່ມນີ້.

- ສິ່ງທີ່ຄວນກວດເບິ່ງກ່ອນເຂົ້າສອບເສັງ

  ສິ່ງທີ່ຄວນກວດເບິ່ງກ່ອນເຂົ້າສອບເສັງ (ພາສາຍີ່ປຸ່ນ)

  Helpful resources for test-takers（English）

- ຂັ້ນຕອນທີ່ວໄປທີ່ສູນສອບເສັງໃນມື້ສອບເສັງ (ວິດີໂອ)

  ຂັ້ນຕອນການສອບເສັງ (ພາສາຍີ່ປຸ່ນ)

  What to expect when testing with Pearson VUE（English）

- ການສອບເສັງ ຕົວ ຢ່າງ ແບບCBT

  ການ ສອບ ເສັງ ຕົວ ຢ່າງ (ພາສາຍ ຍີ່ ປຸ່ນ)

**ຂັ້ນຕອນທີ 4: ການສອບເສັງ**

**ເວລາໄປຮອດສູນສອບເສັງ**

ໃນມື້ສອບເສັງ, ທ່ານຄວນເພື່ອເວລາໃນການລົງທະບຽນ, ກະລຸນາໄປຮອດສູນສອບເສັງຢ່າງໜ້ອຍ 15 ນາທີກ່ອນເລີ່ມການສອບເສັງ.

ຖ້າທ່ານມາຊ້າ, ທ່ານຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າສອບເສັງ ແລະ ຈະບໍ່ສາມາດຂໍ ຄ່າທໍານຽມການສອບເສັງໄດ້ຄືນ.

**ສິ່ງຂອງທີ່ຕ້ອງເອົາມາໃນມື້ສອບເສັງ**

**ທ່ານຕ້ອງໄດ້ສະແດງເອກະສານຢັ້ງຢືນຕົວຕົນໃດໜຶ່ງທີ່ມີອາຍຸໃນເວລາລົງທະບຽນ.**

ລາຍລະອຽດແມ່ນກະລຸນາກວດເບິ່ງຕາມໜ້າຂ້າງລຸ່ມນີ້. ກໍລະນີ "ຊື່ໃນການຈອງ" ແລະ "ຊື່ໃນເອກະສານຢັ້ງຢືນຕົວຕົນ" ຂອງທ່ານແຕກຕ່າງກັນ, ທ່ານຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າສອບເສັງ. ຖ້າ ທ່ານ ບໍ່ ໄດ້ ຮັບ ອະ ນຸ ຍາດ ໃຫ້ ເຂົ້າ ສອບ ເສັງ ເນື່ອງ ຈາກ ຊື່ ບໍ່ ຄື ກັນ, ຄ່າ ທຳ ນຽມ ການ ສອບ ເສັງ ຂອງ ທ່ານ ຈະ ບໍ່ ໄດ້ ຮັບ ການ ສົ່ງ ຄືນ.

| | | |
|---|---|---|
| (ກໍລະນີເຂົ້າສອບເສັງຢູ່ປະເທດຍີ່ປຸ່ນ)<u>ກ່ຽວກັບເອກະສານການຢັ້ງຢືນຕົວຕົນ:</u> | | *ຖ້າທ່ານສອບເສັງທີ່ປະເທດຍີ່ປຸ່ນ, ກະລຸນານຳໃຊ້ໜັງສືຜ່ານແດນຂອງທ່ານ. |
| (ກໍລະນີເຂົ້າສອບເສັງຢູ່ນອກປະເທດຍີ່ປຸ່ນ) | <u>Global ID Policy 1</u> | *ຖ້າທ່ານມີໜັງສືຜ່ານແດນ, ກະລຸນານຳໃຊ້ໜັງສືຜ່ານແດນຂອງທ່ານ. |

ບໍ່ອະນຸຍາດໃຫ້ນຳເອົາສິ່ງຂອງສ່ວນຕົວເຂົ້າຫ້ອງສອບເສັງ. ແນະນຳບໍ່ຄວນນຳເອົາສິ່ງຂອງທີ່ບໍ່ຈຳເປັນສຳລັບການສອບເສັງມາ. ຈະມີການແຈກຢາຍປື້ມບັນທຶກທີ່ອັດແຂງແລ້ວ ແລະປາກກາ (ປາກກາມຶກແບບແຫ້ງໄວ)ໄວ້ຢູ່ໂຕະລົງທະບຽນ, ເພື່ອໃຫ້ທ່ານສາມາດຈົດບັນທຶກໄດ້ໃນເວລາການສອບເສັງ. ຫຼັງຈາກຈົບການສອບເສັງແລ້ວ, ປື້ມບັນທຶກແລະປາກກາຈະຖືກເກັບຄືນ.




**ການຍອມຮັບຂໍ້ຕົກລົງການບໍ່ເປີດເຜີຍຂໍ້ມູນ (NDA)**

ກ່ອນ ທີ່ ທ່ານ ຈະ ເລີ່ມ ການ ສອບ ເສັງ ຢູ່ ສູນສອບ ເສັງ, ທ່ານ ຈະ ຕ້ອງ ຍອມ ຮັບ ຂໍ້ ຕົກ ລົງ ການບໍ່ ເປີດ ເຜີຍຂໍ້ມູນ (NDA). NDAແມ່ນຂໍ້ຕົກລົງທີ່ຈະບໍ່ເປີດເຜີຍຄຳຖາມຫຼືຄຳຕອບຕໍ່ບຸກຄົນທີສາມ. ຖ້າທ່ານ ບໍ່ເຫັນດີ, ທ່ານ ຈະບໍ່ສາມາດເລີ່ມການສອບເສັງໄດ້. ກໍລະນີທີ່ທ່ານບໍ່ເຫັນດີ ແລະເລືອກທີ່ຈະບໍ່ເຂົ້າສອບເສັງ, ຄ່າສອບເສັງຂອງທ່ານ ຈະ ບໍ່ ໄດ້ ຮັບ ການ ສົ່ງ ຄືນ. ຫຼັງຈາກການສອບເສັງ, ພົບເຫັນວ່າທ່ານ ມີການປະພຶດຕ້ອງຫ້າມທີ່ລະເມີດຂໍ້ກຳນົດຂອງຂໍ້ຕົກລົງ, ອົງການຢັ້ງຢືນອາດຖອນໃບຢັ້ງຢືນ ແລະ ຫ້າມບໍ່ໃຫ້ທ່ານເຂົ້າສອບເສັງອີກຕໍ່ໄປໃນອະນາຄົດ.

**ຂັ້ນຕອນທີ 5: ຜົນການສອບເສັງ**

ຜົນ ການ ສອບເສັງ ຈະ ແຈ້ງ ໃຫ້ ທ່ານຮັບຮູ້ ໂດຍຜ່ານສອງ ທາງ ຕາມດ້ານລຸ່ມນີ້::

- ການລາຍງານຄະແນນສອບເສັງ
  ຫຼັງຈາກຈົບການສອບເສັງແລ້ວ, ທ່ານຈະໄດ້ຮັບລາຍງານຄະແນນສອບເສັງ (ຜ່ານ / ບໍ່ຜ່ານ) ຢູ່ສູນສອບເສັງເລີຍ. ທ່ານຍັງສາມາດເບິ່ງຜົນລາຍງານຄະແນນດຽວກັນຢູ່ໃນໜ້າຜູ້ໃຊ້ Pearson VUE ພາຍຫຼັງໄດ້.
  **ໝາຍເຫດ:** ຜົນລາຍງານຄະແນນ ບໍ່ຖືເປັນໃບຢັ້ງຢືນການຜ່ານ.
- ໃບຢັ້ງຢືນສອບເສັງຜ່ານ.
  ພາຍຫຼັງທີ່ຜູ້ສະໝັກສອບເສັງຜ່ານ ແລະ ອົງການຈັດຕັ້ງທີ່ຮັບເຂົ້າເຮັດວຽກ ຕັດສິນໃຈເຮັດສັນຍາການຈ້າງງານແລ້ວ, ສະມາຄົມບຳລຸງຮັກສາອາຄານທົ່ວປະເທດຍີ່ປຸ່ນຈະອອກໃບຢັ້ງຢືນສອບເສັງຜ່ານໃຫ້ກັບອົງການທີ່ຮັບເຂົ້າເຮັດວຽກ ຫຼັງຈາກທີ່ຜູ້ສະໝັກໄດ້ສະເໜີ ແລະ ຊຳລະຄ່າອອກໃບຢັ້ງຢືນ 11,000 ເຢນ (ລວມພາສີບໍລິໂພກ 10%).

### ໝາຍເຫດ

ຜູ້ໃດທີ່ພະຍາຍາມເຂົ້າສອບເສັງ ຫຼື ຜ່ານການສອບເສັງດ້ວຍວິທີການການກະທຳທີ່ບໍ່ຊື່ສັດ, ສໍ້ໂກງ, ຈະຖືກຫ້າມບໍ່ໃຫ້ເຂົ້າສອບເສັງເປັນເວລາ 5 ປີ.
ຖ້າຫາກທ່ານເຂົ້າສອບເສັງດ້ວຍວິທີການການກະທຳທີ່ບໍ່ຊື່ສັດ, ສໍ້ໂກງ, ໃນການຜ່ານການສອບເສັງ,
ໃບຢັ້ງຢືນສອບເສັງຜ່ານຂອງທ່ານຈະຖືກຍົກເລີກ ແລະພວກເຮົາຈະເອົາເກັບໃບຢັ້ງຢືນຂອງທ່ານຄືນ.
ຄ່າທຳນຽມການສອບເສັງ ແລະຄ່າທຳນຽມການອອກໃບຢັ້ງຢືນແມ່ນບໍ່ສາມາດສົ່ງຄືນໄດ້.

### ຂໍ້ມູນສ່ວນບຸກຄົນ

ຂໍ້ມູນສ່ວນບຸກຄົນທີ່ປະກອບໃນຕອນສະໝັກສອບເສັງ ຫຼື ຢູ່ສູນສອບເສັງ ຈະຖືກນຳໃຊ້ເພື່ອຈຸດປະສົງໃນການດຳເນີນການສອບເສັງ,
ອອກໃບຢັ້ງຢືນ, ແລະ ພິຈາລະນາລະບົບທັກສະສະເພາະດ້ານ,
ຕາມກົດລະບຽບການປົກປ້ອງຂໍ້ມູນສ່ວນບຸກຄົນຂອງສະມາຄົມບຳລຸງຮັກສາອາຄານທົ່ວປະເທດຍີ່ປຸ່ນ.
ຂໍ້ມູນສ່ວນບຸກຄົນອາດຈະຖືກສົ່ງມອບໃຫ້ກັບໜ່ວຍງານຂອງລັດຖະບານໃນປະເທດຍີ່ປຸ່ນ ຫຼື ປະເທດບ້ານເກີດຂອງຜູ້ສອບເສັງ.

### - ເວບໄຊ້ທີ່ກ່ຽວຂ້ອງ

ສະມາຄົມບຳລຸງຮັກສາອາຄານທົ່ວປະເທດຍີ່ປຸ່ນ
FAQ ທົ່ວໄປກ່ຽວກັບການຈອງ ສອບ ເສັງ
ຂັ້ນຕອນຕ່າງໆທີ່ສູນສອບເສັງໃນມື້ສອບເສັງ

### - ຕິດຕໍ່ສອບຖາມ

ທ່ານຄວນລະວັງ **ບ່ອນ**ຕິດຕໍ່ສອບຖາມຈະແຕກຕ່າງກັນໄປຕາມເນື້ອໃນການສອບຖາມຂອງທ່ານ.

| **ເນື້ອໃນຕິດຕໍ່ສອບຖາມ** | **ບ່ອນຕິດຕໍ່ສອບຖາມ** |
|---|---|
| ● ກ່ຽວ ກັບ ການ ຈັດ ທະ ບຽນ ແອັກຄາວ, ວິ ທີ ການ ຈອງ, ແລະ ອີ ເມວ ແຈ້ງ ສຳ ເລັດ ການ ຈອງ<br>● ກ່ຽວກັບເອກະສານຢັ້ງຢືນຕົວຕົນ<br>● ກ່ຽວກັບການປ່ຽນຊື່ຫຼັງຈາກລົງທະບຽນ ແອັກຄາວ<br>● ກ່ຽວກັບຄວາມພ້ອມຂອງສະຖານທີ່ສອບເສັງ(ສູນສອບເສັງ) | ຝ່າຍບໍລິການລູກຄ້າ Pearson VUE<br>https://www.pearsonvue.com/us/en/test-takers/customer-service/email.html |
| ● ກ່ຽວກັບເນື້ອໃນການສອບເສັງ<br>● ກ່ຽວກັບຄຸນສົມບັດແລະເງື່ອນໄຂໃນການສອບເສັງ<br>● ກ່ຽວກັບຜົນການສອບເສັງ<br>● ກ່ຽວກັບການອອກໃບຢັ້ງຢືນສອບເສັງຜ່ານ | **ສະມາຄົມບຳລຸງຮັກສາອາຄານທົ່ວປະເທດຍີ່ປຸ່ນ**<br>**E-mail:** tokuteiginou@j-bma.or.jp |